ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ ເລກທີ: ...1096.../ສ.ວ.ນ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2023

# ໜັງສືແຈ້ງເຊີນ

## ຄັດເລືອກບໍລິສັດກວດສອບເອກະສານລາຍງານການເງິນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ປະຈຳປີ 2024

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຂໍແຈ້ງມາຍັງບັນດາ ບໍລິສັດກວດສອບບັນຊີ ເພື່ອເຂົ້າຮ່ວມສະເໜີລາຄາ ຄ່າບໍລິການກວດສອບເອກະສານລາຍງານການເງິນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປະຈຳປີ 2024, ໂດຍອະນຸຍາດໃຫ້ທຸກໆບໍລິສັດກວດສອບບັນຊີ ທີ່ມີຄຸນນະວຸດທິເໝາະສົມ ແລະ ຄົບເງື່ອນໄຂ ເຂົ້າຮ່ວມດັ່ງນີ້:

- ເປັນບໍລິສັດທີ່ໄດ້ມາດຕະຖານ ແລະ ເປັນທີ່ຍອມຮັບຂອງສາກົນ.
- ມີໃບອະນຸຍາດດຳເນີນທຸລະກິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ.
- ໄດ້ຮັບການອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໃຫ້ສາມາດກວດສອບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

ບໍລິສັດກວດສອບບັນຊີ ທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂຄົບຖ້ວນຕາມ ທີ່ລະບຸໄວ້ຂ້າງເທິງ ສາມາດເຂົ້າມາພົວພັນໄດ້ທີ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສຳນັກງານໃຫຍ່ ເລີ່ມແຕ່ວັນທີ 16/11/2023 ຫາ ວັນທີ 20/12/2023 ເວລາ 08:30 ໂມງ ຫາ ເວລາ 16:30 ໂມງ. ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366 ບ້ານ ໂພນຕ້ອງສະຫວາດ ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ.

- **ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ.**

- ເບີໂທ: (+856-21) 415645
- ເບີ Whatsapp: (+856-20) 98666295
- ອີເມວ: Souvanny@souvanny.la
- ເວັບໄຊ: www.souvanny.la

- **ໝາຍເຫດ:**

- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຂໍສະຫງວນສິດ ປະຕິເສດບໍລິສັດຜູ້ບໍລິການ ທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
- ການຄັດເລືອກບໍ່ໄດ້ກຳນົດເງື່ອນໄຂເລືອກຈາກລາຄາພຽງຢ່າງດຽວ ແຕ່ຈະອີງໃສ່ປະສົບການ ແລະ ຄວາມຊຳນານງານ ແລະ ອື່ນໆ ທີ່ກ່ຽວຂ້ອງ.

**ຜູ້ອຳນວຍການໃຫຍ່**
**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

ອຸດສາຫະກຳ ແລະ ການຄ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY ນະຄອນຫຼວງ ວຽງຈັນ

ວັດດານາ ສຸດທະບັນດິດ